ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ເລກທີ 1448 /ກສ

ນະຄອນຫຼວງວຽງຈັນ, ວັນທີ 25 SEP 2025

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ
## ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 78/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ການຕົກລົງ ຂອງກອງປະຊຸມຄະນະປະຈຳພັກກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄັ້ງວັນທີ 29 ສິງຫາ 2025;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ສະບັບເລກທີ 1432/ກສ, ລົງວັນທີ 25 ກັນຍາ 2025.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ແນໃສ່ຈັດຕັ້ງປະຕິບັດວຽກງານກະສິກຳ, ປ່າໄມ້, ພັດທະນາຊົນນະບົດ ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ການຜະລິດເປັນສິນຄ້າ, ການຄຸ້ມຄອງ ແລະ ນຳໃຊ້ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກສນ"**, **"ກສມ"**, ແມ່ນກົງຈັກການຈັດຕັ້ງໜຶ່ງ ທີ່ເປັນຫົວໜ່ວຍວິຊາການ ຂອງພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ; ມີພາລະບົດບາດເປັນເສນາທິການ ໃຫ້ແກ່ຄະນະກຳມະການປົກຄອງ ຂັ້ນເມືອງ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ໃນການຄຸ້ມຄອງຈຸລະພາກກ່ຽວກັບວຽກງານກະສິກຳ, ປ່າໄມ້, ການປຸງແຕ່ງກະສິກຳ ແລະ ປ່າໄມ້ ຂັ້ນຕົ້ນ, ວຽກງານພັດທະນາຊົນນະບົດ, ວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ພາຍໃນນະຄອນ, ເມືອງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ມີໜ້າທີ່ ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ, ມະຕິ ແລະ ນິຕິກຳ ຂອງລັດຖະບານ, ນາຍົກລັດຖະມົນຕີ, ລັດຖະມົນຕີ, ຄະນະກຳມະການປົກຄອງ ຂັ້ນແຂວງ ແລະ ຂັ້ນເມືອງ ກ່ຽວກັບວຽກງານຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ;
2. ເຜີຍແຜ່, ເຊື່ອມຊຶມ ແລະ ຄົ້ນຄວ້າຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ, ນະໂຍບາຍ, ແຜນຍຸດທະສາດ ແລະ ມະຕິຕົກລົງ ຂອງລັດຖະບານ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຄະນະກຳມະການປົກຄອງ ຂັ້ນແຂວງ ແລະ ຂັ້ນເມືອງ ກ່ຽວກັບວຽກງານຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ມາເປັນແຜນການ, ແຜນງານ, ໂຄງການລະອຽດ ຂອງຕົນ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້າ ສ້າງ, ປັບປຸງ ບັນດານິຕິກຳ, ລະບຽບການ ອັນຈຳເປັນສຳລັບຄຸ້ມຄອງວຽກງານ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ໂດຍຜັນຂະຫຍາຍບັນດານິຕິກຳ, ລະບຽບການຕ່າງໆ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງວາງອອກ ຕາມການແບ່ງຂັ້ນຄຸ້ມຄອງ;
4. ຊຸກຍູ້, ສົ່ງເສີມ ການຜະລິດສະບຽງອາຫານໃຫ້ພຽງພໍ ເພື່ອຄໍ້າປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ; ມີວັດຖຸດິບປ້ອນໂຮງງານປຸງແຕ່ງ; ຍູ້ແຮງການຜະລິດກະສິກຳ ແລະ ປ່າໄມ້ ເປັນສິນຄ້າແບບຫຼາກຫຼາຍ ຕາມທ່າແຮງທີ່ໄດ້ປຽບຂອງທ້ອງຖິ່ນ ໂດຍມີການກຳນົດເຂດການຜະລິດຕິດພັນກັບການປຸງແຕ່ງ ແລະ ການຕະຫຼາດ; ຊຸກຍູ້ການພັດທະນາ ວິສາຫະກິດຟາມ, ຄອບຄົວຕົວແບບ ໃນການຜະລິດສິນຄ້າສົດ, ຊີວະພາບ, ສະອາດ, ປອດໄພ, ຜະລິດສິນຄ້າ ເພື່ອຊົມໃຊ້ພາຍໃນນະຄອນ, ເມືອງ ແລະ ສະໜອງໃຫ້ຕະຫຼາດພາຍໃນປະເທດ ເພື່ອທົດແທນການນຳເຂົ້າຈາກຕ່າງປະເທດເທື່ອລະກ້າວ ໂດຍສອດຄ່ອງກັບມາດຕະຖານສຸຂານາໄມ ພືດ ແລະ ສັດ ຂອງປະເທດຄູ່ຄ້າ;
5. ຊຸກຍູ້, ສົ່ງເສີມ ແລະ ຖ່າຍທອດ, ຈັດຝຶກອົບຮົມ, ແນະນຳດ້ານເຕັກນິກ ກ່ຽວກັບການຜະລິດແນວພັນພືດ-ສັດ, ການປັບປຸງດິນ, ການປູກ, ການລ້ຽງ, ການປຸງແຕ່ງ, ການນຳໃຊ້ກົນຈັກ ແລະ ດ້ານການບໍລິຫານຈັດການກຸ່ມ, ສະຫະກອນ ແລະ ກອງທຶນ, ການເຂົ້າເຖິງຕະຫຼາດ ແລະ ແຫຼ່ງທຶນ ໃຫ້ຊາວກະສິກອນ, ກຸ່ມ, ສະຫະກອນ ແລະ ຜູ້ປະກອບການ ເພື່ອແນໃສ່ຍົກລະດັບຄວາມສາມາດ ຂອງການຜະລິດ ແລະ ການປຸງແຕ່ງ ໃຫ້ມີຄຸນນະພາບຕາມຄວາມຕ້ອງການ ຂອງຕະຫຼາດ ເພື່ອເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກ ພ້ອມທັງສ້າງ ແລະ ຍົກລະດັບຄວາມຮູ້ວິຊາການກະສິກຳ ແລະ ປ່າໄມ້ ຂັ້ນບ້ານ;
6. ສ້າງ, ປັບປຸງ, ຕິດຕາມ ແລະ ປະເມີນ ກຸ່ມ, ສະຫະກອນ ແລະ ກອງທຶນ ລວມທັງການສົ່ງເສີມການຜະລິດແບບຜູກພັນຕາມສັນຍາ, ຜະລິດຕາມຄວາມຕ້ອງການ ຂອງຕະຫຼາດ ໃຫ້ເປັນຂະບວນກວ້າງຂວາງ;
7. ພັດທະນາສະຖານີບໍລິການເຕັກນິກກະສິກຳ ຕາມທ່າແຮງເຂດການຜະລິດ ຂອງນະຄອນ, ເມືອງ ໃຫ້ເຂັ້ມແຂງ, ຮັບປະກັນການເຄື່ອນໄຫວໃຫ້ມີປະສິດທິພາບ ດ້ວຍການປະກອບທຶນ, ພະນັກງານວິຊາການ ທີ່ມີຄວາມຮູ້-ຄວາມສາມາດ, ປະກອບວັດຖຸ-ເຕັກນິກ ແລະ ເຕັກໂນໂລຊີ ການປູກ, ການລ້ຽງ, ການປຸງແຕ່ງ ທີ່ທັນສະໄໝໃຫ້ສະຖານີ ເພື່ອຖ່າຍທອດບົດຮຽນ, ເປັນບ່ອນສາທິດໃຫ້ແກ່ຊາວກະສິກອນ, ຜູ້ຜະລິດ, ກຸ່ມປຸງແຕ່ງ, ຜູ້ປະກອບການ, ນັກສຶກສາ ແລະ ສັງຄົມ;

8. ເກັບກຳ ແລະ ສະໜອງ ຂໍ້ມູນທີ່ຈຳເປັນໃຫ້ແກ່ການຢັ້ງຢືນກະສິກຳສະອາດ, ສຸຂານາໄມ ພືດ ແລະ ສັດ ເພື່ອສົ່ງອອກຜະລິດຕະພັນກະສິກຳ ແລະ ປ່າໄມ້; ຄຸ້ມຄອງ, ຕິດຕາມ, ກວດກາ ຜະລິດຕະພັນກະສິກຳ, ປ່າໄມ້, ປັດໄຈການຜະລິດ ຕາມມາດຕະຖານດ້ານເຕັກນິກ ແລະ ຄຸນນະພາບ ທີ່ກະຊວງວາງອອກ; ຄຸ້ມຄອງການນຳໃຊ້, ການເຄື່ອນຍ້າຍ ແລະ ປົກປັກຮັກສາ ພືດ, ສັດລ້ຽງ, ສັດນ້ຳ, ແນວພັນໄມ້ ແລະ ປັດໄຈການຜະລິດ ຕາມກົດໝາຍ ແລະ ລະບຽບການ; ປ້ອງກັນ ແລະ ສະກັດກັ້ນການລະບາດ ຂອງພະຍາດ, ພະຍາດສັດ ແລະ ສັດຕູພືດ ພາຍໃນນະຄອນ, ເມືອງ;

9. ສົມທົບກັບຂະແໜງການສາຍຕັ້ງ ແລະ ພາກສ່ວນກ່ຽວຂ້ອງ ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາ ໂຮງງານປຸງແຕ່ງກະສິກຳ ແລະ ປ່າໄມ້ ຂັ້ນຕົ້ນ ຕາມການແບ່ງຂັ້ນຄຸ້ມຄອງ ບົນພື້ນຖານກົດໝາຍ ແລະ ລະບຽບການ;

10. ຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ປັດໄຈ ເຂົ້າໃນການຜະລິດກະສິກຳ ເປັນຕົ້ນ ຝຸ່ນເຄມີ, ຢາປາບສັດຕູພືດ, ຢາຂ້າຫຍ້າ, ສານຄວບຄຸມການຈະເລີນເຕີບໂຕຂອງພືດ, ການຕັດແຕ່ງພັນທຸກຳ (GMO), ຢາປົວພະຍາດສັດ, ຢາວັກຊີນ, ຄູໂນກປົວສັດ, ອາຫານສັດສຳເລັດຮູບ, ວັດຖຸດິບສຳລັບການຜະລິດຢາ ແລະ ອາຫານສັດ ແລະ ສານເຄມີອື່ນໆ ໃຫ້ໄດ້ຕາມມາດຕະຖານກະສິກຳສະອາດ;

11. ສ້າງ ແລະ ປັບປຸງ ກຸ່ມຜູ້ນຳໃຊ້ນ້ຳ ໃຫ້ຖືກກັບລະບຽບການ ແລະ ມີຄວາມເຂັ້ມແຂງ ຮັບປະກັນໃຫ້ລະບົບຊົນລະປະທານທີ່ລັດໄດ້ລົງທຶນສ້າງ ໃຫ້ມີການຄຸ້ມຄອງ ແລະ ນຳໃຊ້ ຢ່າງມີປະສິດທິຜົນ; ຊຸກຍູ້, ສົ່ງເສີມປະຊາຊົນໃຫ້ເປັນເຈົ້າການສ້າງ ແລະ ປັບປຸງ ຊົນລະປະທານພູມປັນຍາຊາວບ້ານ, ນຳໃຊ້ພະລັງງານທົດແທນເຂົ້າໃນການສູບນ້ຳໃນລະດັບຄອບຄົວ ເພື່ອໃຫ້ຊຸມຊົນພັດທະນາ, ນຳໃຊ້ ແລະ ປົກປັກຮັກສາ ພ້ອມທັງຝຶກອົບຮົມວຽກງານຄຸ້ມຄອງ-ນຳໃຊ້ ໃຫ້ກຸ່ມນຳໃຊ້ນ້ຳຊົນລະປະທານ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ;

12. ຄຸ້ມຄອງປົກປັກຮັກສາປ່າໄມ້ ຕາມລະບົບ 03 ປະເພດປ່າ ເປັນຕົ້ນ ປ່າສະຫງວນແຫ່ງຊາດ ຫຼື ອຸທິຍານແຫ່ງຊາດ, ປ່າປ້ອງກັນແຫ່ງຊາດ ແລະ ປ່າຜະລິດ ທີ່ຕັ້ງຢູ່ເມືອງຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ; ເຂົ້າຮ່ວມຈັດຕັ້ງປະຕິບັດມາດຕະການຟື້ນຟູປ່າໄມ້ ແລະ ປົກປັກຮັກສາແຫຼ່ງນ້ຳ-ຄວາມສົມດຸນ ຂອງລະບົບນິເວດ ແລະ ຊີວະນາໆພັນ ພ້ອມທັງການປ້ອງກັນໄຟໄໝ້ລາມປ່າ; ສົ່ງເສີມການຟື້ນຟູປ່າໄມ້ ແລະ ການປູກໄມ້ເປັນສິນຄ້າ ຕິດພັນກັບການສົ່ງເສີມການທ່ອງທ່ຽວທຳມະຊາດ, ການພັດທະນາກະສິກຳ, ປ່າໄມ້ ແລະ ການປູກ-ການລ້ຽງສັດ ແບບປະສົມປະສານ, ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ ແລະ ຍູ້ແຮງການຄ້າຂາຍສິນເຊື່ອກາກບອນປ່າໄມ້ໃນເຂດປ່າໄມ້ທີ່ມີເງື່ອນໄຂ ຕາມທິດສີຂຽວ ແລະ ຍືນຍົງ;

13. ສົມທົບກັບຂະແໜງການສາຍຕັ້ງ ແລະ ພາກສ່ວນກ່ຽວຂ້ອງ ຊຸກຍູ້ ແລະ ອຳນວຍຄວາມສະດວກ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ລົງທຶນໃສ່ການປູກໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ; ວາງແຜນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ 03 ປະເພດປ່າ ແລະ ເນື້ອທີ່ປ່າໄມ້ ໃນເຂດຄຸ້ມຄອງຂອງບ້ານ ຕາມການແບ່ງຂັ້ນຄຸ້ມຄອງ ພ້ອມທັງມີມາດຕະການປ້ອງກັນໄຟໄໝ້ລາມປ່າ ຢູ່ທ້ອງຖິ່ນຂອງຕົນ;

14. ເປັນເຈົ້າການຈັດຕັ້ງຜັນຂະຫຍາຍການຄຸ້ມຄອງ ແລະ ພັດທະນາທີ່ດິນ ຕາມການແບ່ງຂັ້ນຄຸ້ມຄອງ ເປັນຕົ້ນ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ສຳຫຼວດ ແລະ ກຳນົດ, ວາງແຜນການນຳໃຊ້ທີ່ດິນ, ຈັດສັນທີ່ດິນຂອງລັດແບບມີກຳນົດ, ປັກຫຼັກໝາຍ ເຂດທີ່ດິນສະຫງວນ, ອະນຸລັກດິນທີ່ຈະນຳໃຊ້ ແລະ ພັດທະນາການຫັນປ່ຽນປະເພດທີ່ດິນ, ຂຶ້ນທະບຽນອອກໃບຕາດິນລັດ ໃນການໃຫ້ເຊົ່າ ຫຼື ສຳປະທານ; ອອກໃບຕາດິນ ແລະ ອອກໃບຢັ້ງຢືນຫ້ອງຊຸດ ຄອນໂດມິນຽມ, ຈົດທະບຽນນິຕິກຳທີ່ດິນ, ສ້າງເຂດ ແລະ ຫົວໜ່ວຍ ລາຄາປະເມີນທີ່ດິນ, ອະນຸຍາດ ແລະ ຄຸ້ມຄອງ ວຽກງານທຸລະກິດ ກ່ຽວກັບທີ່ດິນ, ຄຸ້ມຄອງລະບົບຂໍ້ມູນຂ່າວສານທີ່ດິນ, ພັດທະນາທີ່ດິນແຕ່ລະປະເພດ ເປັນຕົ້ນ ທີ່ດິນກະສິກຳ ແລະ ທີ່ດິນປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ;

15. ຊຸກຍູ້, ຕິດຕາມ, ກວດກາ ວຽກງານຄຸ້ມຄອງ ແລະ ພັດທະນາທີ່ດິນ ຕາມການແບ່ງຂັ້ນຄຸ້ມຄອງ ເປັນຕົ້ນ ການຂຶ້ນທະບຽນອອກໃບຕາດິນ, ອອກໃບຢັ້ງຢືນການນຳໃຊ້, ການພັດທະນາ, ປ່ຽນເປົ້າໝາຍ, ການສ້າງສຳມະໂນ ແລະ ປະເມີນລາຄາ;
16. ເກັບກຳຂໍ້ມູນ, ສ້າງເປັນສະຖິຕິ ແລະ ຕິດຕາມປະເມີນຜົນ ການນຳໃຊ້ທີ່ດິນກະສິກຳປະເພດຕ່າງໆ ລວມທັງການເຊົ່າ, ສຳປະທານ, ອອກໃບຢັ້ງຢືນການນຳໃຊ້ ແລະ ໃບຢັ້ງຢືນ ການພັດທະນາ;
17. ຄຸ້ມຄອງ, ໃຫ້ບໍລິການວິໄຈ ແລະ ສົ່ງເສີມປັບປຸງດິນກະສິກຳ, ການຜະລິດ ແລະ ນຳໃຊ້ຝຸ່ນ ເປັນຕົ້ນ ອິງຄະທາດ, ຊີວະພາບ, ເຄມີ ແລະ ອື່ນໆ ພາຍໃນນະຄອນ, ເມືອງ;
18. ສາທິດ ແລະ ຜັນຂະຫຍາຍ ຮູບແບບການພັດທະນາທີ່ດິນກະສິກຳທີ່ເໝາະສົມກັບການຜະລິດແຕ່ລະເຂດ ຂອງນະຄອນ, ເມືອງ; ຄຸ້ມຄອງ, ຕິດຕາມ, ກວດກາ ການນຳໃຊ້ທີ່ດິນກະສິກຳ, ດິນປ່າໄມ້, ດິນບໍລິເວນນ້ຳ, ແຫຼ່ງນ້ຳ ແລະ ຊັບພະຍາກອນປ່າໄມ້ ໃນຂອບເຂດຮັບຜິດຊອບຂອງຕົນ ໃຫ້ເກີດປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ;
19. ເປັນໃຈກາງປະສານງານກັບບັນດາຫ້ອງການອ້ອມຂ້າງ ຂອງນະຄອນ, ເມືອງ ໃນການພັດທະນາຊົນນະບົດຮອບດ້ານ ຕາມພາລະບົດບາດ ຂອງບັນດາຫ້ອງການທີ່ຂຶ້ນກັບນະຄອນ, ເມືອງ; ຄົ້ນຄວ້າ, ກຳນົດຈຸດສຸມພັດທະນາຊົນນະບົດໃນແຕ່ລະໄລຍະ ຕາມທິດສາມສ້າງ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງທ້ອງຖິ່ນ ພ້ອມທັງຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ເປັນແຕ່ລະໄລຍະ;
20. ສ້າງ ແລະ ປັບປຸງ ແຜນຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ຕາມການແບ່ງຂັ້ນຄຸ້ມຄອງ ເປັນຕົ້ນ ການຜັນຂະຫຍາຍຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ, ການຄຸ້ມຄອງ ທີ່ດິນບໍລິເວນນ້ຳ, ນ້ຳໃຕ້ດິນ ລວມທັງສ້າງ ແລະ ປັບປຸງ ສະພາບລວມ ແລະ ແຜນຄຸ້ມຄອງອ່າງຮັບນ້ຳ, ອ່າງເກັບນ້ຳ ແລະ ແຜນຄຸ້ມຄອງຄຸນນະພາບນ້ຳ ຕາມອ່າງຮັບນ້ຳຂະໜາດກາງ ເປັນແຕ່ລະໄລຍະ; ປະສານສົມທົບກັບກົມຊັບພະຍາກອນນ້ຳ ແລະ ພາກສ່ວນທີ່ກ່ຽວຂ້ອງ; ອອກອະນຸຍາດ ນຳໃຊ້ນ້ຳໃຕ້ດິນຂະໜາດກາງ, ຢັ້ງຢືນດ້ານວິຊາການ ກ່ຽວກັບການບໍລິການຂຸດເຈາະ ຫຼື ຊີເຈາະ ນ້ຳໃຕ້ດິນຂະໜາດນ້ອຍ; ກຳນົດເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳຂັ້ນນະຄອນ, ເມືອງ, ປົກປັກຮັກສາ, ຟື້ນຟູ, ພັດທະນານ້ຳ ແລະ ຊັບພະຍາກອນນ້ຳ ຂັ້ນເມືອງ;
21. ສຳຫຼວດ, ຂຶ້ນບັນຊີ, ເກັບກຳຂໍ້ມູນ ປະລິມານ ແລະ ຄຸນນະພາບນ້ຳ, ທີ່ດິນບໍລິເວນນ້ຳ ແລະ ການນຳໃຊ້ນ້ຳ; ສ້າງຂໍ້ມູນຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳ ທີ່ຢູ່ໃນຂອບເຂດ ຂອງນະຄອນ, ເມືອງ, ເທດສະບານ ບົນພື້ນຖານສອດຄ່ອງ ແລະ ເຊື່ອມຕໍ່ກັບລະບົບຂໍ້ມູນຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ;
22. ສົມທົບກັບຂະແໜງການຂັ້ນແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ປັບປຸງ, ສ້າງ ແລະ ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ ແລະ ອຸທົກກະສາດ ພາຍໃນນະຄອນ, ເມືອງ ໃຫ້ທັນສະໄໝ; ນຳໃຊ້ຕາໜ່າງ ສະຖານີອຸຕຸການບິນ, ສະຖານີອຸຕຸກະເສດ; ຍົກລະດັບສະຖານີ ຕິດຕາມແຜ່ນດິນໄຫວ ເພື່ອເຮັດການບໍລິການຂໍ້ມູນຂ່າວສານ ລວມທັງການເຮັດພະຍາກອນ ແລະ ການແຈ້ງເຕືອນໄພລ່ວງໜ້າ ໃຫ້ແກ່ສັງຄົມ, ການຄົມມະນາຄົມທາງອາກາດ ແລະ ການຜະລິດກະສິກຳຂອງທ້ອງຖິ່ນ ໃຫ້ທັນເວລາ;
23. ຈັດຕັ້ງປະຕິບັດ ການຕິດຕາມສະພາບອາກາດ, ວັດແທກ, ເກັບກຳ, ສັງລວມ ແລະ ລາຍງານ ຂໍ້ມູນອຸຕຸນິຍົມ ແລະ ອຸທົກກະສາດ; ສະເໜີປັບປຸງຍົກລະດັບຕາໜ່າງ ສະຖານີພູມອາກາດ, ສະຖານີອຸຕຸກະເສດ, ຈຸດວັດແທກປະລິມານນ້ຳຝົນ ແລະ ຈຸດວັດແທກລະດັບນ້ຳ ພ້ອມທັງຄຸ້ມຄອງ ແລະ ປົກປັກຮັກສາ ບັນດາສະຖານີດັ່ງກ່າວ ລວມທັງສະຖານີແຜ່ນດິນໄຫວ ໃຫ້ມີຄວາມຍືນຍົງ;
24. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາ ການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ມົນລະພິດ, ໂຄງການລົງທຶນ ແລະ ກິດຈະການຕ່າງໆ; ກວດກາ ແລະ ສະກັດກັ້ນການບຸກ

ລຸກປ່າໄມ້, ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້, ການຄ້າໄມ້, ສັດນໍ້າ-ສັດປ່າ, ເຄື່ອງປ່າຂອງດົງ ແລະ ຊີວະນາໆພັນທີ່ຜິດກົດໝາຍ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອດຳເນີນຄະດີຕໍ່ຜູ້ກະທຳຜິດ ລວມທັງການຫັນປ່ຽນທີ່ດິນປ່າໄມ້, ທີ່ດິນກະສິກຳ ແລະ ທີ່ດິນເຂດຊຸມຊົນລະປະທານ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;

25. ຊຸກຍູ້ທຸລະກິດຄອບຄົວ ສ້າງແຜນແກ້ໄຂບັນຫາສິ່ງແວດລ້ອມ; ແຈ້ງເຕືອນ, ປັບໃໝ, ອອກ, ຕໍ່ອາຍຸ, ໂຈະ, ຖອນ ຫຼື ຍົກເລີກ ໃບຢັ້ງຢືນ ກ່ຽວກັບສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ; ສົ່ງເສີມວຽກງານສ້າງຈິດສຳນຶກ ກ່ຽວກັບສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ; ປະກອບສ່ວນສ້າງຕົວເມືອງ, ຕາແສງ, ບ້ານ, ໂຮງຮຽນ, ສຳນັກງານຫ້ອງການ ຂຽວສະອາດງາມຕາ ລວມທັງການຄຸ້ມຄອງສິ່ງເສດເຫຼືອ;

26. ປະກອບສ່ວນ ສ້າງບົດປະເມີນ, ສ້າງແຜນທີ່ຄວາມສ່ຽງ ແລະ ຄວາມບອບບາງ ຈາກການປ່ຽນແປງດິນຟ້າອາກາດ, ຄາດຄະເນການປ່ອຍທາດອາຍເຮືອນແກ້ວ; ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານສິນເຊື່ອກາກບອນ ໃນແຕ່ ລະຂົງເຂດ ໂດຍສອດຄ່ອງກັບມາດຕະຖານຫຼຸດຜ່ອນທາດອາຍເຮືອນແກ້ວ ຕາມການແບ່ງຂັ້ນຄຸ້ມຄອງ;

27. ກວດກາການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ, ເປັນຕົ້ນ: ດິນ, ນໍ້າ, ແຮ່ທາດ, ປ່າໄມ້ ແລະ ຊີວະນາໆພັນ ຂອງບັນດາຂະແໜງການ, ໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ; ກວດກາການຈັດຕັ້ງປະຕິບັດພັນທະທາງດ້ານສິ່ງແວດລ້ອມຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມແຜນຄຸ້ມຄອງ ແລະ ຕິດຕາມກວດກາສັນຍາສຳປະທານ ແລະ ສັນຍາຕ່າງໆ ທີ່ຕິດພັນກັບໂຄງການ ລວມທັງທຸລະກິດຄອບຄົວ;

28. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກວດກາ, ປະເມີນ ແລະ ແກ້ໄຂ ຮັບມືເຫດການສຸກເສີນທາງດ້ານສິ່ງແວດລ້ອມທີ່ເກີດຈາກທຳມະຊາດ ຫຼື ເກີດຈາກກິດຈະການຕ່າງໆ, ສິ່ງແວດລ້ອມຕົວເມືອງທີ່ຕິດພັນກັບບັນຫາມົນລະພິດ ສຽງ, ກິ່ນ, ນໍ້າເປື້ອນ, ສິ່ງເສດເຫຼືອ ແລະ ສານເຄມີ ບົນພື້ນຖານຄຳສະເໜີ ແລະ ຄຳຮ້ອງຟ້ອງ ຂອງປະຊາຊົນພາຍໃນທ້ອງຖິ່ນຕົນ;

29. ສົ່ງເສີມ ການນຳໃຊ້ຜົນສຳເລັດ ຂອງການຄົ້ນຄວ້າ, ທົດລອງ ດ້ານວິທະຍາສາດເຕັກນິກກະສິກຳ ແລະ ສິ່ງແວດລ້ອມ, ການປັບປຸງ, ເລືອກເຟັ້ນ ແລະ ຂະຫຍາຍ ແນວພັນພືດ, ໄມ້, ສັດ ແລະ ສັດນໍ້າ ຕິດພັນກັບການຜະລິດເປັນສິນຄ້າ; ມີສ່ວນຮ່ວມໃນການຄຸ້ມຄອງແຫຼ່ງພັນທຸກຳພືດ, ສັດ ຂອງ ສປປ ລາວ ຕາມທີ່ກົດໝາຍກຳນົດ ແລະ ຄຸ້ມຄອງປົກປ້ອງລິຂະສິດຜົນ ຂອງການຄົ້ນຄວ້າທົດລອງ;

30. ຊຸກຍູ້, ສົ່ງເສີມ, ເອື້ອອຳນວຍຄວາມສະດວກ ໃຫ້ແກ່ການລົງທຶນຂອງຜູ້ປະກອບການ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເປັນຂະບວນການແຂງແຮງ; ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ບັນດາໂຄງການງົບປະມານຂອງລັດ ແລະ ໂຄງການຮ່ວມມືກັບຕ່າງປະເທດ ພາຍໃຕ້ຄວາມຮັບຜິດຊອບຂອງຕົນໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍວາງອອກແຕ່ລະໄລຍະ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ໃຫ້ໄດ້ຜົນສຳເລັດເປັນຢ່າງດີ;

31. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ຕົກລົງ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ທີ່ຕິດພັນກັບວຽກງານກະສິກຳ ແລະ ສິ່ງແວດລ້ອມ ພາຍໃນນະຄອນ, ເມືອງ ບົນພື້ນຖານກົດໝາຍ ແລະ ລະບຽບການ ໃນແຕ່ລະໄລຍະ;

32. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງ ແລະ ປັບປຸງກົງຈັກການຈັດຕັ້ງ, ການກຳນົດຕຳແໜ່ງງານ ຂອງຂະແໜງການ ເປັນລະບົບຄົບຊຸດ ຕາມທິດກະທັດຮັດ, ມີປະສິດທິພາບ; ສ້າງ ແລະ ປັບປຸງ ແຜນກຳນົດພະນັກງານນຳພາ-ຄຸ້ມຄອງ ຂອງພະແນກການ, ຜັນຂະຫຍາຍແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບ; ຄຸ້ມຄອງ, ບຳລຸງ-ກໍ່ສ້າງ ສະມາຊິກພັກ,ພະນັກງານ-ລັດຖະກອນ, ພາລະກອນ;

ຕີລາຄາປະເມີນຜົນ ສະມາຊິກພັກ, ພະນັກງານ-ລັດຖະກອນ, ພາລະກອນ ຢ່າງເປັນປົກກະຕິ; ປະຕິບັດນະໂຍບາຍ ແລະ ວຽກງານແຂ່ງຂັນ-ຍ້ອງຍໍ ຕໍ່ພະນັກງານ-ລັດຖະກອນ, ພາລະກອນ ຂອງຕົນ ຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້;

33. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ສົນທິສັນຍາ, ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໃນຂະແໜງກະສິກຳ ແລະ ສິ່ງແວດລ້ອມ; ເປັນຫົວໜ່ວຍປະສານງານຂັ້ນເມືອງ ວຽກງານຂອງຄະນະກຳມະການແມ່ນ້ຳຂອງແຫ່ງຊາດ ເພື່ອການປະສານງານ, ຊຸກຍູ້ສົ່ງເສີມ ແລະ ສະໜອງຂໍ້ມູນທີ່ກ່ຽວຂ້ອງທາງວິຊາການ ເພື່ອຈັດຕັ້ງປະຕິບັດສັນຍາ ວ່າດ້ວຍການຮ່ວມມື ເພື່ອພັດທະນາອ່າງແມ່ນ້ຳຂອງແບບຍືນຍົງ ປີ 1995 ແລະ ການຮ່ວມມືສາກົນ ໃນຂົງເຂດການຄຸ້ມຄອງອ່າງແມ່ນ້ຳຂອງ ເປັນຕົ້ນ ການຮ່ວມມືດ້ານຊັບພະຍາກອນນ້ຳ ຂອງຂອບການຮ່ວມມືແມ່ນ້ຳຂອງ-ແມ່ນ້ຳລ້ານຊ້າງ;

34. ສ້າງ, ຄຸ້ມຄອງ, ປັບປຸງ ແລະ ຂະຫຍາຍ ລະບົບເຄືອຂ່າຍຖານຂໍ້ມູນສະຖິຕິ ແລະ ວຽກງານຂ່າວສານຂອງນະຄອນ, ເມືອງ; ສັງລວມບົດຮຽນຕົວແບບທີ່ດີ, ຜົນສຳເລັດຈາກການຄົ້ນຄວ້າທົດລອງ ພ້ອມທັງໂຄສະນາ, ເຜີຍແຜ່ອອກສູ່ສັງຄົມ ຢ່າງກວ້າງຂວາງ;

35. ເກັບກຳສະຖິຕິ ແລະ ສະໜອງຂໍ້ມູນຂ່າວສານ ດ້ານກະສິກຳ ແລະ ສິ່ງແວດລ້ອມ ໃຫ້ເປັນລະບົບ, ຄົບຖ້ວນ, ຖືກຕ້ອງ ແລະ ທັນສະພາບການ ໂດຍການນຳໃຊ້ລະບົບເຕັກໂນໂລຊີທີ່ທັນສະໄໝ ເພື່ອເປັນບ່ອນອີງໃນການວາງແຜນ, ການຈັດຕັ້ງປະຕິບັດໂຄງການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນ ບັນດາແຜນງານ, ແຜນການ ແລະ ໂຄງການ ທີ່ຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຂອງຕົນ ໃຫ້ມີປະ ສິດທິຜົນ;

36. ຄຸ້ມຄອງ, ບໍລິຫານການເງິນ ແລະ ຊັບສິນ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ພ້ອມທັງຂຶ້ນແຜນການ, ງົບປະມານ ແລະ ສະຫຼຸບສັງລວມ ຕາມກົດໝາຍ ແລະ ລະບຽບການ;

37. ສົມທົບພາກສ່ວນກ່ຽວຂ້ອງ ໃນການລະດົມທຶນ ແລະ ສະໜອງທຶນ ໃຫ້ແກ່ການຈັດຕັ້ງປະຕິບັດບັນດາໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ພາຍໃນທ້ອງຖິ່ນຕົນ, ວາງມາດຕະການໃນການຄຸ້ມຄອງ, ນຳໃຊ້ກອງທຶນຫຼຸດຜ່ອນຄວາມທຸກຍາກ ແລະ ການປ່ອຍສິນເຊື່ອ ຂອງທະນາຄານ ແລະ ສະຖາບັນການເງິນ ທີ່ກ່ຽວຂ້ອງ ພ້ອມທັງຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການກຳນົດໄວ້;

38. ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດລະບຽບການ, ກົດໝາຍ, ຍຸດທະສາດ, ແຜນງານ, ແຜນການ, ໂຄງການລົງທຶນ ຂອງລັດ ຫຼື ໂຄງການທຶນກູ້ຢືມ ແລະ ຊ່ວຍເຫຼືອທາງການເພື່ອການພັດທະນາ, ນິຕິກຳ ແລະ ລະບຽບການຕ່າງໆ ທີ່ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ, ຄະນະກຳມະການປົກຄອງ ຂັ້ນເມືອງ ວາງອອກ ໃຫ້ມີປະສິດທິຜົນສູງ; ຕ້ານ ແລະ ສະກັດກັ້ນການສໍ້ລາດບັງຫຼວງ, ແກ້ໄຂຄຳຮ້ອງ, ຄຳສະເໜີ ຂອງພົນລະເມືອງ ຕາມການແບ່ງຂັ້ນຄຸ້ມຄອງ;

39. ປະສານສົມທົບກັບພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ແລະ ໜ່ວຍງານອື່ນຂັ້ນເມືອງ ໃນການຈັດຕັ້ງປະຕິບັດໜ້າທີ່, ພາລະບົດບາດ ຂອງຕົນ ເປັນແຕ່ລະໄລຍະ ຢ່າງເປັນລະບົບຕໍ່ເນື່ອງ;

40. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ການມອບໝາຍ ຂອງຄະນະກຳມະການປົກຄອງ ຂັ້ນເມືອງ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ.

ມາດຕາ 4 ຂອບເຂດສິດ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ມີສິດ ດັ່ງນີ້:

1. ສະເໜີປັບປຸງກົງຈັກການຈັດຕັ້ງ, ບັນຈຸ, ສັບຊ້ອນຈັດວາງພະນັກງານນຳພາ-ຄຸ້ມຄອງ ພາຍໃນຫ້ອງການ ຕໍ່ຄະນະກຳມະການປົກຄອງ ຂັ້ນເມືອງ ໂດຍເອກະພາບກັບພະແນກກະສິກຳ ແລະ ສິ່ງແວດລ້ອມ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ; ສະເໜີການກຳນົດຕຳແໜ່ງງານ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກຳນົດໄວ້ ຕາມທິດກະທັດຮັດ, ເຂັ້ມແຂງ ແລະ ມີປະສິດທິພາບ;
2. ຈັດຕັ້ງປະຕິບັດບັນດານິຕິກຳ, ຄຳແນະນຳ, ຂໍ້ກຳນົດ, ເຕັກນິກ ແລະ ມາດຕະຖານ ທີ່ກະຊວງ ວາງອອກ ເພື່ອຄຸ້ມຄອງວຽກງານກະສິກຳ, ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການປຸງແຕ່ງກະສິກຳ ແລະ ປ່າໄມ້ ແລະ ວຽກງານພັດທະນາຊົນນະບົດ ຂອງນະຄອນ, ເມືອງ; ຜັນຂະຫຍາຍຈັດຕັ້ງປະຕິບັດການຊີ້ນຳ ຂອງກະຊວງ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ໃນດ້ານເຕັກນິກວິຊາການ ຕາມລະບົບກົນໄກຄຸ້ມຄອງສາຍຕັ້ງ, ແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງສິດ ໃນການຕົກລົງບັນຫາ; ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກ່ຽວຂ້ອງກັບພາລະບົດບາດ ຂອງທ້ອງຖິ່ນຕົນ; ຈັດກອງປະຊຸມ, ງານວາງສະແດງສິນຄ້າກະສິກຳ ແລະ ຕະຫຼາດນັດ, ຝຶກອົບຮົມ, ສຳມະນາວິຊາການ;
3. ຕິດຕາມ, ກວດກາ ການນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເປັນຕົ້ນ ດິນ, ແຮ່ທາດ, ນ້ຳ, ປ່າໄມ້, ຊີວະນາໆພັນ ແລະ ອື່ນໆ, ການພັດທະນາທີ່ດິນກະສິກຳ ແລະ ການປົກປັກຮັກສາສິ່ງແວດລ້ອມ ຕາມການແບ່ງຂັ້ນຄຸ້ມຄອງ ພາຍໃນນະຄອນ, ເມືອງ;
4. ນຳສະເໜີ ຮ່າງ ຍຸດທະສາດ, ແຜນແມ່ບົດ ຈັດສັນທີ່ດິນຂັ້ນແຂວງ; ອອກຂໍ້ຕົກລົງ, ຄຳສັ່ງ, ແຈ້ງການ, ຄຳແນະນຳ ກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາ ທີ່ດິນ; ຄົ້ນຄວ້າ, ນຳສະເໜີ ຄະນະກຳມະການປົກຄອງຂັ້ນເມືອງ ພິຈາລະນາ ອອກອະນຸຍາດ; ສັ່ງໂຈະ ຫຼື ຍົກເລີກ ກິດຈະກຳໃດໜຶ່ງ ກ່ຽວກັບການຄຸ້ມຄອງ ແລະ ພັດທະນາທີ່ດິນ ແລະ ໂຮງງານຜະລິດຝຸ່ນ ຕາມການແບ່ງຂັ້ນຄຸ້ມຄອງ; ຄິດໄລ່ຄ່າທຳນຽມ ແລະ ເກັບຄ່າບໍລິການໃນການຈົດທະບຽນການເຄື່ອນໄຫວ ແລະ ການປ່ຽນແປງສິດນຳໃຊ້ທີ່ດິນ ຕາມກົດໝາຍ ແລະ ລະບຽບການ;
5. ກ່າວເຕືອນ ຫຼື ນຳໃຊ້ມາດຕະຖານອື່ນ ຕາມກົດໝາຍ ຕໍ່ຜູ້ທີ່ສ້າງຜົນເສຍຫາຍແກ່ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ບໍ່ປະຕິບັດພັນທະທາງດ້ານສິ່ງແວດລ້ອມ ຕາມແຜນຄຸ້ມຄອງ; ຕິດຕາມ, ກວດກາສິ່ງແວດລ້ອມ, ສັນຍາສຳປະທານ ແລະ ສັນຍາຕ່າງໆ ພາຍໃນນະຄອນ, ເມືອງ;
6. ເຂົ້າຮ່ວມເກັບກຳຂໍ້ມູນ ເພື່ອສ້າງບົດລາຍງານສະພາບສິ່ງແວດລ້ອມ ແລະ ສະພາບມົນລະພິດ ຂອງແຂວງ; ເຂົ້າຮ່ວມຕິດຕາມ ແລະ ສະໜອງຂໍ້ມູນ ການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ໂຄງການ ກ່ຽວກັບການປັບຕົວ ແລະ ການຫຼຸດຜ່ອນທາດອາຍເຮືອນແກ້ວ;
7. ເຂົ້າຮ່ວມເປັນເຈົ້າການໃນການເຊື່ອມສານວຽກງານປ້ອງກັນ, ການກຽມພ້ອມ ແລະ ການຫຼຸດຜ່ອນຄວາມສ່ຽງໄພພິບັດເຂົ້າໃນແຜນງານ, ແຜນການ ຂອງຂະແໜງການ ແລະ ເປັນໃຈກາງປະສານງານໃນວຽກງານ ຂອງນະຄອນຫຼວງວຽງຈັນ, ແຂວງ ກ່ຽວກັບການຫຼຸດຜ່ອນຄວາມສ່ຽງ, ສ້າງຄວາມທົນທານ ແລະ ການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ;
8. ສະເໜີພາກສ່ວນທີ່ກ່ຽວຂ້ອງ ອອກ, ໂຈະຊົ່ວຄາວ, ຍົກເລີກ ຫຼື ຖອນໃບຢັ້ງຢືນ, ໃບອະນຸຍາດ, ໃບທະບຽນດຳເນີນກິດຈະການສຳລັບຜູ້ປະກອບການບໍລິການດ້ານກະສິກຳ ແລະ ສິ່ງແວດລ້ອມ ທີ່ເຄື່ອນໄຫວບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
9. ອອກຄຳແນະນຳ, ແຈ້ງການ, ໜັງສືສະເໜີ ເຖິງ ຫ້ອງການອ້ອມຂ້າງນະຄອນ, ເມືອງ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ, ໂຄງການ, ຫົວໜ່ວຍວິຊາການ ແລະ ຫົວໜ່ວຍການຜະລິດ, ຫົວ

ໜ່ວຍທຸລະກິດ ກ່ຽວກັບວຽກງານກະສິກຳ, ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ການປຸງແຕ່ງກະສິກຳ ແລະ ວຽກງານພັດທະນາຊົນນະບົດ ພາຍໃນນະຄອນ, ເມືອງ;

10. ນຳສະເໜີຄະນະກຳມະການປົກຄອງ ຂັ້ນເມືອງ ປັບປຸງ, ໂຈະ ການປະຕິບັດ ຫຼື ຍົກເລີກ ນິຕິກຳ ຂອງຫ້ອງການອື່ນ ທີ່ຂັດກັບກົດໝາຍ ແລະ ລະບຽບການຂອງຂະແໜງການຕົນ;
11. ສະເໜີຂໍອະນຸມັດສ້າງຕັ້ງ, ປັບປຸງ ຫຼື ຍຸບກຸ່ມການຜະລິດ, ສະມາຄົມ, ສະຫະກອນ ຫຼື ຫົວໜ່ວຍການຜະລິດກະສິກຳ ແລະ ປ່າໄມ້ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;
12. ຄົ້ນຄວ້າ, ປະກອບຄຳເຫັນ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານກະສິກຳ ແລະ ປ່າໄມ້; ປະກອບຂໍ້ມູນໃຫ້ແກ່ການຢັ້ງຢືນບົດວິພາກເສດຖະກິດ-ເຕັກນິກ, ຢັ້ງຢືນແຜນນຳເຂົ້າ, ອອກ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດກະສິກຳ ແລະ ປ່າໄມ້ ຕາມການແບ່ງຂັ້ນຄຸ້ມຄອງ ບົນພື້ນຖານກົດໝາຍ ແລະ ລະບຽບການ ໃນແຕ່ລະໄລຍະ;
13. ກວດກາພື້ນທີ່ ແລະ ການດຳເນີນທຸລະກິດ ທີ່ຕິດພັນກັບວຽກງານກະສິກຳ ແລະ ສິ່ງແວດລ້ອມ ເພື່ອສະໜອງຂໍ້ມູນໃຫ້ແກ່ການຢັ້ງຢືນດ້ານຄຸນນະພາບ, ຄວາມປອດໄພ ສຳລັບການສະເໜີອະນຸຍາດສົ່ງອອກ, ນຳເຂົ້າ ແລະ ສົ່ງຜ່ານ ຜະລິດຕະພັນກະສິກຳ ແລະ ປ່າໄມ້, ບັນດາວັດຖຸອຸປະກອນ, ປັດໄຈການຜະລິດ ຕາມການແບ່ງຂັ້ນຄຸ້ມຄອງ ບົນພື້ນຖານກົດໝາຍ ແລະ ລະບຽບການ; ຄຸ້ມຄອງກວດກາ, ກັກກັນ ພືດ-ສັດ, ການກວດກາ, ສະກັດກັ້ນ ແລະ ຕ້ານອາຊະຍາກຳຂ້າມຊາດ ກ່ຽວກັບສັດນ້ຳ, ສັດປ່າ, ໄມ້ ແລະ ເຄື່ອງປ່າຂອງດົງ ຢູ່ດ່ານທ້ອງຖິ່ນ, ດ່ານປະເພນີ ຕາມການມອບໝາຍສິດຈາກຄະນະກຳມະການປົກຄອງ ຂັ້ນເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງວາງມາດຕະການຕິດຕາມ ແລະ ສະກັດກັ້ນການແຜ່ລະບາດ ຂອງສັດຕູພືດ ແລະ ພະຍາດສັດ ໃຫ້ທັນເວລາ; ສະໜອງຂໍ້ມູນ ເພື່ອຂຶ້ນທະບຽນປ່າປູກ, ຢັ້ງຢືນສວນປູກພືດ, ໄມ້ປູກ, ຟາມລ້ຽງສັດ ແລະ ສັດນ້ຳ ຕາມການແບ່ງຂັ້ນຄຸ້ມຄອງ;
14. ຄົ້ນຄວ້າ, ວາງແຜນ ແລະ ນຳສະເໜີ ຄະນະກຳມະການປົກຄອງ ຂັ້ນເມືອງ ກ່ຽວກັບວຽກງານພັດທະນາຊົນນະບົດ ຊອກຫາຮູບແບບ ແລະ ວິທີການທີ່ເໝາະສົມ ໃນການຈັດສັນພູມລຳເນົາ, ການຝຶກອົບຮົມວິຊາຊີບ ແລະ ຈັດສັນອາຊີບຄົງທີ່ ໃຫ້ປະຊາຊົນພາຍຫຼັງຢຸດຕິການຖາງປ່າເຮັດໄຮ່;
15. ທົບທວນ ແລະ ພິຈາລະນາ ຮັບຮອງເອົາແຜນຄຸ້ມຄອງສິ່ງແວດລ້ອມ ສຳລັບທຸລະກິດແບບຄອບຄົວໃນຂອບເຂດນະຄອນ, ເມືອງ; ເຂົ້າຮ່ວມຂະບວນການທົບທວນ ແລະ ພິຈາລະນາຮັບຮອງເອົາບົດລາຍງານການສຶກສາເບື້ອງຕົ້ນ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດຂອງໂຄງການລົງທຶນ ໃນຂອບເຂດທ້ອງຖິ່ນຕົນ;
16. ເຂົ້າຮ່ວມຈັດຕັ້ງປະຕິບັດການສັງເກດສະພາບອາກາດ, ວັດແທກ, ເກັບກຳ, ສັງລວມ ແລະ ຄຸ້ມຄອງລາຍງານຂໍ້ມູນອຸຕຸນິຍົມ ແລະ ອຸທົກກະສາດ, ໄພພິບັດທຳມະຊາດ ແລະ ແຜ່ນດິນໄຫວ;
17. ນຳສະເໜີຄະນະກຳມະການປົກຄອງ ຂັ້ນເມືອງ ແຕ່ງຕັ້ງຄະນະສະເພາະກິດ ເພື່ອຕິດຕາມ, ກວດກາສິ່ງແວດລ້ອມ ຂອງໂຄງການລົງທຶນ ແລະ ກິດຈະການຕ່າງໆ ຕາມການແບ່ງຂັ້ນຄຸ້ມຄອງ ໃນກໍລະນີເກີດເຫດສຸກເສີນ;
18. ຮຽກໂຮມພະນັກງານນຳພາ-ຄຸ້ມຄອງ ແລະ ພະນັກງານ-ລັດຖະກອນ ໃນຄວາມຮັບຜິດຊອບຂອງຕົນ, ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ; ຫັນພະນັກງານລົງປະຈຳຢູ່ສູນ, ສະຖານີ ແລະ ກອງຄຸ້ມຄອງ 03 ປະເພດປ່າ ຢູ່ພາກສະໜາມ ຕາມຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການ ທີ່ກ່ຽວຂ້ອງ;
19. ຄຸ້ມຄອງ, ບຳລຸງກໍ່ສ້າງ, ນຳໃຊ້, ຈັດວາງ, ປະຕິບັດນະໂຍບາຍ ແລະ ປະຕິບັດວິໄນຕໍ່ພະນັກງານ-ລັດຖະກອນທີ່ ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ;
20. ຄຸ້ມຄອງ, ແບ່ງປັນ ແລະ ມອບໝາຍ ແຜນການ, ງົບປະມານ, ພາຫະນະ ແລະ ອຸປະກອນ ທີ່ໄດ້ຮັບອະນຸມັດຈາກຄະນະກຳມະການປົກຄອງຂັ້ນເມືອງ ແລະ ພະແນກການສາຍຕັ້ງ ໃຫ້ບັນດາໜ່ວຍງານ ແລະ

ທຽບເທົ່າ, ໂຄງການອ້ອມຂ້າງນະຄອນ, ເມືອງ ແລະ ຫົວໜ່ວຍວິຊາການທີ່ຂຶ້ນກັບຕົນ ເພື່ອນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຕາມກົດໝາຍ ແລະ ລະບຽບການ ໃຫ້ມີປະສິດທິຜົນສູງ;

21. ດໍາເນີນການກວດກາຜົນການຈັດຕັ້ງປະຕິບັດແຜນງານ, ແຜນການ ແລະ ໂຄງການພັດທະນາກະສິກໍາ, ປ່າໄມ້, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ພັດທະນາຊົນນະບົດ ຂອງນະຄອນ, ເມືອງ ເພື່ອສະຫຼຸບສັງລວມ, ວິໄຈ ແລະ ປະເມີນຜົນ ໃຫ້ເຫັນດ້ານດີ, ດ້ານອ່ອນ-ຄົງຄ້າງ ແລະ ວາງມາດຕະການແກ້ໄຂໃນຕໍ່ໜ້າ ພ້ອມທັງລາຍງານຄະນະກໍາມະການປົກຄອງ ຂັ້ນເມືອງ ແລະ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ;
22. ປະຕິບັດສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງຄະນະກໍາມະການປົກຄອງ ຂັ້ນເມືອງ ແລະ ພະແນກກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ, ແຂວງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ແມ່ນອີງໃສ່ສະພາບຈຸດພິເສດ ຂອງແຕ່ລະທ້ອງຖິ່ນ ຕາມທິດກົງຈັກກະທັດຮັດ, ໜັກແໜ້ນ, ເຂັ້ມແຂງ, ເຄື່ອນໄຫວມີປະສິດທິພາບ ແລະ ປະສິດທິຜົນ ຕາມການຕົກລົງ ຂອງປະທານຄະນະກໍາມະການປົກຄອງ ຂັ້ນເມືອງ ແລະ ການເຫັນດີເປັນເອກະພາບ ຂອງພະແນກກະສິກໍາ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ, ແຂວງ ບົນພື້ນຖານສອດຄ່ອງກັບແຈ້ງການ ສະບັບເລກທີ 0014/ກສ, ລົງວັນທີ 04 ກໍລະກົດ 2025 ດັ່ງນີ້:

1. ໜ່ວຍງານບໍລິຫານ, ແຜນການ, ຈັດຕັ້ງ ແລະ ກວດກາ;
2. ໜ່ວຍງານສົ່ງເສີມກະສິກໍາ ແລະ ສະຫະກອນ;
3. ໜ່ວຍງານປູກຝັງ;
4. ໜ່ວຍງານລ້ຽງສັດ ແລະ ການປະມົງ;
5. ໜ່ວຍງານຊົນລະປະທານ, ຊັບພະຍາກອນນໍ້າ, ອຸຕຸນິຍົມ ແລະ ອຸທົກກະສາດ;
6. ໜ່ວຍງານສິ່ງແວດລ້ອມ ແລະ ປ່າໄມ້;
7. ໜ່ວຍງານຄຸ້ມຄອງ ແລະ ພັດທະນາທີ່ດິນ;
8. ໜ່ວຍງານພັດທະນາຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກ;
9. ໜ່ວຍງານກວດກາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນ ຂອງຫ້ອງການກະສິກໍາ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ປະກອບດ້ວຍ:

1. ຫົວໜ້າຫ້ອງການ ຈໍານວນ 01 ທ່ານ ຮັບຜິດຊອບຕໍ່ ປະທານກໍາມະການປົກຄອງ ຂັ້ນເມືອງ ແລະ ພະແນກກະສິກໍາ ແລະ ສິ່ງແວດລ້ອມ ໃນການຄຸ້ມຄອງວຽກງານກະສິກໍາ ແລະ ສິ່ງແວດລ້ອມ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກໍານົດໄວ້; ໃນເວລາຫົວໜ້າຫ້ອງການ ຕິດຂັດ ຕ້ອງມອບສິດ ໃຫ້ຮອງຫົວໜ້າຫ້ອງການ ທ່ານໃດໜຶ່ງ ເປັນຜູ້ຮັກສາການແທນ;
2. ຮອງຫົວໜ້າຫ້ອງການ ຈໍານວນໜຶ່ງ ຊ່ວຍຫົວໜ້າຫ້ອງການ ໃນການຊີ້ນໍາວຽກງານຂອງຕົນ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງຫົວໜ້າຫ້ອງການ; ຮອງຫົວໜ້າຫ້ອງການ ເປັນຜູ້ຮັກສາການແທນ ໃນເວລາຫົວໜ້າຫ້ອງການ ຕິດຂັດ;

3. ຫົວໜ້າໜ່ວຍງານ ແລະ ທຽບເທົ່າ; ຮອງຫົວໜ້າໜ່ວຍງານ ແລະ ທຽບເທົ່າ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ;

ການບັນຈຸ, ສັບຊ້ອນ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ;
2. ປະຕິບັດລະບອບຫົວໜ້າດຽວ ຕາມການແບ່ງຂັ້ນຄຸ້ມຄອງ, ມີການແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ ທຸກລະດັບ; ນຳໃຊ້ຄວາມຮູ້ຄວາມສາມາດ ຂອງຕົນຢ່າງສຸດຂີດ ເພື່ອເຮັດຫຼ້ອນໜ້າທີ່ວຽກງານ ທີ່ໄດ້ຮັບມອບໝາຍ; ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
3. ທຸກການເຄື່ອນໄຫວວຽກງານ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ອົງການປົກຄອງທ້ອງຖິ່ນ, ກະຊວງ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ມາຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບຜົນດີ.

### ມາດຕາ 8 ແບບແຜນວິທີເຮັດວຽກ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນງານ, ແຜນການ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ; ປະສານສົມທົບຢ່າງແໜ້ນແຟ້ນກັບຫ້ອງການອື່ນ, ຄະນະກຳມະການປົກຄອງຂັ້ນເມືອງ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ແນໃສ່ໜູນໃຊ້ກຳລັງແຮງ ຂອງທຸກພາກສ່ວນ ເພື່ອພັດທະນາວຽກງານກະສິກຳ ແລະ ສິ່ງແວດລ້ອມ;
2. ປະຕິບັດລະບອບປະຊຸມ, ສ່ອງແສງ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ ຄະນະກຳມະການປົກຄອງ ຂັ້ນເມືອງ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ ເປັນປົກກະຕິ;
3. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງ ຢ່າງເຂັ້ມງວດ;
4. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງ ຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 9 ງົບປະມານ ແລະ ຕາປະທັບ

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ ມີງົບປະມານ ແລະ ຕາປະທັບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ, ພະແນກກະສິກຳ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ແຂວງ, ບັນດາໜ່ວຍງານ ແລະ ທຽບເທົ່າ ທີ່ຂຶ້ນກັບຫ້ອງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມອບໃຫ້ ຄະນະກຳມະການປົກຄອງ ຂັ້ນເມືອງ ຜັນຂະຫຍາຍຂໍ້ຕົກລົງສະບັບນີ້ ອອກເປັນອັນລະອຽດໃຫ້ແກ່ການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານອັນສະເພາະ ຂອງຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ນະຄອນ, ເມືອງ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ນະຄອນ ສະບັບເລກທີ 0956/ກປ, ລົງວັນທີ 28 ມີນາ 2022 ແລະ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ສະບັບເລກທີ 5507/ກຊສ, ລົງວັນທີ 27 ຕຸລາ 2021.

ລັດຖະມົນຕີ

ປອ. ລິນຄຳ ດວງສະຫວັນ